ທະນາຄານຮ່ວມພັດທະນາ

| Position ID: | EXC_REM/FXD |
|---|---|

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕຳແໜ່ງ:** **ພະນັກງານ ໂອນເງິນ - ບໍລິການຕ່າງປະເທດ**

**Position Name:** ***Remittance & International-Service Officer***

❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ບໍລິການຊຳລະສະສາງ ທັງພາຍໃນ ແລະ ຕ່າງປະເທດ;
- ລິງເລີກວຽກງານດ້ານເງິນໂອນພາຍໃນ RTGS ແລະ ລະຫວ່າງ ປະເທດ Swift & API;
- ປະສານງານຫຼັກວຽກງານລະຫວ່າງໜ່ວຍບໍລິການ ທີ່ຕິດພັນກັບ MoneyGram;
- ຕິດຕາມ ແລະ ບັນທຶກບັນຊີ ທີ່ກ່ຽວຂ້ອງກັບທຸລະກຳໂອນເງິນ;
- ຊອກຫາລູກຄ້າທີ່ຖືກເປົ້າໝາຍ ເພື່ອຂະຫຍາຍຖານລູກຄ້າໃໝ່ ແລະ ຮັກສາລູກຄ້າເກົ່າ;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕຳແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ການເງິນ-ການທະນາຄານ;
  - ເສດຖະສາດ;
  - ບໍລິຫານທຸລະກິດ ຫຼື ສາຂາທີ່ກ່ຽວຂ້ອງ.

❖ ກ່ຽວກັບຜູ້ສະໝັກ (About Applicant):

- ຜູ້ສະໝັກທີ່ຮຽນຈົບໃໝ່ ຫຼື ມີປະສົບການເຮັດວຽກມາກ່ອນ ຍິ່ງເປັນການດີ;
- ມີມະນຸດສຳພັນດີ, ມັກການເຮັດວຽກກັບໂຕເລກ, ແລະ ການວິເຄາະ;
- ສາມາດສື່ສານ, ຂຽນ, ອ່ານ ພາສາອັງກິດ ຫຼື ພາສາຈີນ ໄດ້ລະດັບດີ ຫຼື ຖ້າຈົບມາຈາກຕ່າງປະເທດ ຫຼື ຫຼັກສູດສາກົນ ແມ່ນຈະພິຈາລະນາເປັນພິເສດ;
- ມີທັກສະໃນການສື່ສານ ແລະ ເຈລະຈາຕໍ່ລອງໄດ້ເປັນຢ່າງດີ;
- ມີຄວາມຮູ້ ຄວາມສາມາດໃນການໃຊ້ຄອມພິວເຕີ, ການນຳໃຊ້ MS Office ແລະ Excel ໃນລະດັບດີ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ມີຄວາມຮູ້ກ່ຽວກັບວຽກງານການເງິນ-ການທະນາຄານ ແລະ ວຽກງານບໍລິການ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ ແລະ ຍຶດໝັ້ນໃນໜ້າທີ່.